ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມຄຸ້ມຄອງຊັບສິນແຫ່ງລັດ

ຄະນະຮັບຜິດຊອບການປະມູນ

ເລກທີ 2446/ຄຊລ

ນະຄອນຫຼວງວຽງຈັນ,ວັນທີ 08 ເມສາ 2025

**ໜັງສືແຈ້ງເຊີນປະມູນ**

**ເຖິງ:** ບັນດາບໍລິສັດ, ຮ້ານຂາຍລົດ ທີ່ເປັນຕົວແທນຂອງໂຮງງານຜະລິດລົດ ທີ່ມີຄຸນວຸດທິເໝາະສົມ.

**ເລື່ອງ:** ແຈ້ງເຊີນບໍລິສັດຂອງທ່ານເຂົ້າຮ່ວມປະມູນເພື່ອສະໜອງພາຫະນະຮັບໃຊ້ວຽກງານວິຊາສະເພາະຂອງກະຊວງພະລັງງານ ແລະ ບໍ່ແຮ່ ໃນການກວດກາ, ຕິດຕາມ, ປະເມີນຜົນໂຄງການຂຸດຄົ້ນ, ສາຫຼວດ,ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ.

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງຊັບສິນແຫ່ງລັດ ສະບັບເລກທີ 6199/ກງ, ລົງວັນທີ 16 ທັນວາ 2021;
- ອີງຕາມ ຂໍ້ຕົກລົງຂອງທ່ານລັດຖະມົນຕີ ກະຊວງການເງິນ ສະບັບເລກທີ 0990/ກງ,ລົງວັນທີ 1 ເມສາ 2025;
- ອີງຕາມ ບົດບັນທຶກກອງປະຊຸມປຶກສາຫາລືຂອງຄະນະຮັບຜິດຊອບການປະມູນ ຄັ້ງວັນທີ 07 ເມສາ 2025.

1. ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ໃນນາມຕາງໜ້າໃຫ້ຄະນະກຳມະການຮັບຜິດຊອບການປະມູນ ຂໍເຊີນບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບສະໜອງພາຫະນະເພື່ອປະກອບເປັນລົດຮັບໃຊ້ວຽກງານວິຊາສະເພາະຂອງກະຊວງພະລັງງານ ແລະ ບໍ່ແຮ່ ໃນການກວດກາ, ຕິດຕາມ, ປະເມີນຜົນໂຄງການຂຸດຄົ້ນ,ສຳຫຼວດ,ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ປະເພດລົດກະບະ **ຈຳນວນ 10 ຄັນ** ຊຶ່ງປະກອບມີ: (ລົດກະບະ ADVENTURE 2.800 CC 4 WD AUTOMATIC ປະກອບວິນສຳລັບລົງພາກສະໜາມ, ຫຼັງຄາ ແຄລີ່ບອຍ, ກັນຊົນເຫຼັກ, ຢາງສະໜາມ ຈຳນວນ 08 ຄັນ, ລົດກະບະ ADVENTURE 2.800 CC 4 WD AUTOMATIC ຈຳນວນ 02 ຄັນ) ກຳນົດເວລາມອບສົ່ງລົດແມ່ນ 20 ວັນ.
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນອະນຸຍາດໃຫ້ບໍລິສັດທີ່ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ, ມີຄຸນນະວຸດທິເໝາະສົມ ທີ່ສາມາດສະໜອງພາຫະນະໄດ້ຕາມກຳນົດດ້ານເຕັກນິກ, ປະເພດ, ມາດຕະຖານເຕັກນິກ ແລະ ກຳນົດເວລາ.
4. ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈເຂົ້າຮ່ວມປະມູນ ແມ່ນສາມາດຕິດຕໍ່ພົວພັນຊື້ຊອງປະມູນໄດ້ທີ່ຄະນະຮັບຜິດຊອບການປະມູນທີ່ກົມຄຸ້ມຄອງຊັບສິນແຫ່ງລັດກະຊວງການເງິນ ເລີ່ມຂາຍຊອງປະມູນໃນວັນທີ **08 ເມສາ ຫາວັນທີ 29 ເມສາ 2025** ໃນໂມງເວລາທາງລັດຖະການແຕ່ 8.00 ໂມງ ຫາ 16.00 ໂມງ;
5. ເອກະສານປະມູນຄົບຊຸດທີ່ເປັນພາສາລາວສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈ ແລະ ພົວພັນຄະນະຮັບຜິດຊອບທີ່ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ (ຊັ້ນ 03 ຕຶກກົມສ່ວຍສາອາກອນ)ໃນລາຄາ **11.000.000** ກີບຕໍ່ຊອງປະມູນ ຈຳນວນເງິນດັ່ງກ່າວນີ້ຈະໄດ້ນຳໃຊ້ເຂົ້າໃນວຽກງານຂອງຄະນະຮັບຜິດຊອບການປະມູນ ໂດຍຈະບໍ່ມີການສົ່ງຄືນ.
6. ຊອງປະມູນຕ້ອງສົ່ງໃນວັນເວລາເປີດຊອງປະມູນໂດຍຊ້ອງໜ້າຄະນະກຳມະການຮັບຜິດຊອບການປະມູນ ໃນ**ເວລາ 9.00 ໂມງ ຂອງວັນທີ 29 ເມສາ 2025.** ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກແມ່ນຈະບໍ່ອະນຸຍາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ **ຊອງຈະໄດ້ເປີດໃນເວລາ 9.00 ໂມງ** ຂອງວັນດຽວກັນ ທີ່ຫ້ອງປະຊຸມກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ, ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຜູ້ປະມູນ ຫຼື ຕົວແທນຂອງຜູ້ປະມູນທີ່ໄດ້ຮັບການແຕ່ງຕັ້ງມອບສິດໃຫ້ເຂົ້າຮ່ວມນຳ.
7. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນຈາກທະນາຄານ ຫຼື ແຊກເງິນຄໍ້າປະກັນ ຊຶ່ງມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫລຸດ 2% ຂອງລາຄາປະມູນມາພ້ອມ.
8. ທ່ານສາມາດພົວພັນ ແລະ ສອບຖາມຂໍ້ມູນໄດ້ທີ່ ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ (ຊັ້ນ 03 ຕຶກກົມສ່ວຍສາອາກອນ) ທີ່ຕັ້ງຢູ່ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ໂທລະສັບ +856 21 263252 ໃນໂມງເວລາລັດຖະການ.

ຫົວໜ້າກົມຄຸ້ມຄອງຊັບສິນແຫ່ງລັດ

ຫົວໜ້າຄະນະກຳມະການຮັບຜິດຊອບການປະມູນ

ພຸດທະສິນ ເຮືອງທະວົງ

Mr.Phouthasinh HEANGTHAVONG